# *“ບົດອອກຂ່າວ`”*

## ເວທີສົນທະນາລະດັບສູງ ເພື່ອສະໜັບສະໜູນການຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ພາຍໃຕ້ຫົວຂໍ້:

*“ພາຍຫຼັງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC), ການເປີດກວ້າງຄວາມມຸ່ງມາດປາດຖະໜາໃໝ່ໃນການພັດທະນາ – ການເຕີບໂຕ, ສົ່ງເສີມວຽກເຮັດງານທຳ ແລະ ເຕັກໂນໂລຊີ”*

**ໃນວັນທີ 22 ຕຸລາ 2025**, ກະຊວງການເງິນ ໃນນາມຕ່າງໜ້າ ລັດຖະບານ ແຫ່ງ ສປປ ລາວ ຮ່ວມກັບອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ໄດ້ຈັດເວທີສົນທະນາລະດັບສູງ ເພື່ອປຶກສາຫາລື ແລະ ກະກຽມຄວາມພ້ອມຮອບດ້ານໃນການຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV (14th HL-RTM 2025) ເຊິ່ງມີກຳນົດຈັດຂຶ້ນໃນວັນທີ **19 ພະຈິກ 2025,** ທີ່ ນະຄອນຫຼວງວຽງຈັນ.

ເວທີສົນທະນາໃນຄັ້ງນີ້ ໄດ້ໃຫ້ກຽດກ່າວເປີດໂດຍ: **ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ ກະຊວງການເງິນ** ແລະ ກ່າວມີຄຳເຫັນໂດຍ **ທ່ານ ບັກໂຮເດັຍ ເບີຄະນ່ອຟ, ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ.** ໂດຍມີຜູ້ຕາງໜ້າຈາກບັນດາກະຊວງຂະແໜງການ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາສອງຝ່າຍ ແລະ ຫຼາຍຝ່າຍ, ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ລວມທັງ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເຂົ້າຮ່ວມ.

ໃນເວທີສົນທະນາລະດັບສູງຄັ້ງນີ້, ບັນດາຜູ້ແທນໄດ້ພ້ອມກັນສົນທະນາເນື້ອໃນຫົວຂໍ້ທີ່ສຳຄັນ ເຊັ່ນ:

(1) ບາດກ້າວອັນສຳຄັນ ກ່ຽວກັບອະນາຄົດຂອງການພັດທະນາໃນ ສປປ ລາວ;

(2) ປຶກສາຫາລືບັນດາຍຸດທະສາດທີ່ສຳຄັນ ເພື່ອກຳນົດແນວທາງການພັດທະນາຂອງ ສປປ ລາວ ພາຍຫຼັງການຫຼຸດພົ້ນອອກຈາກ LDC;

(3) ການປະກອບສ່ວນໃນຂະບວນການສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X, ການກຽມຄວາມພ້ອມ ເພື່ອຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC) ໃນປີ 2026 ແລະ ຖະແຫຼງການວຽງຈັນ ສະບັບທີ 3 (VD III).

**ໃນເວທີສົນທະນາ ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ ກະຊວງການເງິນ** ໄດ້ກ່າວເນັ້ນວ່າ: “ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແມ່ນເວທີປຶກສາຫາລືທີ່ສຳຄັນໃນການລະດົມຂົນຂວາຍທຶນຊ່ວຍເຫຼືອເພື່ອການພັດທະນາ (ຊ.ກ.ພ) ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ X ໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້, ໂດຍສຸມໃສ່ການສ້າງຄວາມເຂັ້ມແຂງ ແລະ ພັດທະນາ ເພື່ອກ້າວເຂົ້າສູ່ການຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາຢ່າງມີຄຸນນະພາບ ແລະ ຍືນຍົງ.”

ນອກຈາກນັ້ນ, **ທ່ານ ບັກໂຮເດັຍ ເບີຄະນ່ອຟ, ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ** ໄດ້ກ່າວມີຄຳເຫັນເສີມຕື່ມວ່າ: “ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ຂອງ ສປປ ລາວ ແມ່ນໄດ້ກຳນົດໄວ້ໃນ ເດືອນ ພະຈິກ 2026. ການວິເຄາະເບື້ອງຕົ້ນຊີ້ໃຫ້ເຫັນເຖິງການສູນເສຍທາງດ້ານການຄ້າທີ່ອາດຈະເກີດຂຶ້ນ, ໂດຍສະເພາະໃນຕະຫຼາດສະຫະພາບເອີຣົບ, ເຊິ່ງຄາດຄະເນວ່າອາດຈະຫຼຸດລົງເຖິງ $66.3 ລ້ານໂດລາສະຫະລັດ. ແຕ່ຢ່າງໃດກໍ່ຕາມ, ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ບໍ່ແມ່ນຈຸດສິ້ນສຸດຂອງການພັດທະນາ ແຕ່ເປັນການລິເລີ້ມບໍລິບົດໃໝ່ ແຫ່ງ ການພັດທະນາ ການຫັນປ່ຽນດັ່ງກ່າວ ຈະນຳມາເຊິ່ງການສິ້ນສຸດມາດຕະການສະໜັບສະໜູນສາກົນ ລວມທັງ, ສິດທິພິເສດທາງດ້ານການຄ້າ ແລະ ການສະໜອງທຶນເພື່ອການພັດທະນາ ຢ່າງຄ່ອຍເປັນຄ່ອຍໄປ. ສະນັ້ນ, ເພື່ອຮັບປະກັນການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໝັ້ນທ່ຽງ, ຍືນຍົງ ແລະ ຈະບໍ່ກັບມາເປັນປະເທດດ້ອຍພັດທະນາອີກ ເວທີປຶກສາຫາລືໃນມື້ນີ້ ແມ່ນມີຄວາມສຳຄັນ ແລະ ເປັນສິ່ງຈຳເປັນທີ່ສຸດ ທີ່ພວກເຮົາຈະຮ່ວມກັນ ກຳນົດ ແລະ ຂັບເຄື່ອນນະໂຍບາຍ ໃຫ້ເປັນຮູບປະທຳ ແລະ ເປັນນະໂຍບາຍທີ່ຮັບໃຊ້ຜົນປະໂຫຍດຂອງປະຊາຊົນ, ປັບປຸງວຽກງານການຮ່ວມມື ເພື່ອການພັດທະນາ

ຂອງ ສປປ ລາວ ໃຫ້ກ້າວເຂົ້າສູ່ລວງເລິກ ເພື່ອປົກປ້ອງຜົນໂຫຍດທີ່ພວກເຮົາໄດ້ສູ້ຊົນ ແລະ ຍາດມາໄດ້ຢ່າງຍາກລໍາບາກ ທັງເປັນການຫຼຸດຜ່ອນຄວາມສ່ຽງທີ່ເກີດຈາກຜົນກະທົບພາຍນອກ ໄປພ້ອມໆກັນ.

---


**ຂໍ້ມູນເພີ້ມຕື່ມຕິດຕໍ່**: ກົມຮ່ວມື ແລະ ການເງິນສາກົນ ກະຊວງການເງິນ
ທ່ານ ສັນຕິ ຊິງນາວົງ, ຫົວໜ້າພະແນກ ອົງການຈັດຕັ້ງສາກົນ ໂທ: 020 2222 3989
**ອີເມວສ໌**: **Rtpsecretariat@Gmail.com**